ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 098 /ທຄຕລ 2020

ນະຄອນຫຼວງວຽງຈັນ, ວັນທີ: 27 NOV 2020

# ໜັງສືແຈ້ງເຊີນ

**ເຖິງ :** ບັນດາບໍລິສັດ, ຫ້າງຮ້ານຕົວແທນຈຳໜ່າຍແພເສື້ອ ແລະ ແພໂສ້ງ ຢູ່ໃນນະຄອນຫລວງວຽງຈັນ.

**ເລື່ອງ :** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະເມີນລາຄາແພເສື້ອ ແລະ ແພໂສ້ງ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນທີ່ມີຄວາມສົນໃຈຍື່ນຊອງປະເມີນລາຄາ ແພເສື້ອ ແລະ ແພໂສ້ງ ທຄຕລ ກຳນົດສິ່ງໃຫ້, ການຍື່ນຊອງປະເມີນລາຄາຕ້ອງປະກອບເອກະສານຕາມເງື່ອນໄຂດັ່ງລຸ່ມນີ້ :

| ລ/ດ | ລາຍການ | ເງື່ອນໄຂກ່ຽວກັບແພ | ຈຳນວນ |
|---|---|---|---|
| 1 | **ແພເສື້ອ**<br>ພະນັກງານຊາຍ<br>ສີຂາວ | - ແພ Mau So Mi Nam S04 (TPNL: 50% coffee, 50% Recycle Poly)<br>- Width 57" 58 " | 3.000 ແມັດ |
| 2 | **ແພໂສ້ງ**<br>ພະນັກງານຊາຍ<br>ສີຟ້າເຂັ້ມ | - ເບີ 16/R –E0810 ສີຟ້າເຂັ້ມ The fabric is Royal elegant<br>- Tetron 80% and Rayon 20%<br>- Width 150 cm | 3.000 ແມັດ |

❖ **<u>ໝາຍເຫດ:</u>** ສາມາດເຂົ້າມາເບິ່ງຕົວຢ່າງແທ້ ຫຼື ຫາກຕ້ອງການໃຫ້ສົ່ງຮູບພາບເພີ່ມເຕີມ ຫຼື VIDEO ຂອງແພຕົວຢ່າງສາມາດພົວພັນໄດ້ທີ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສນຍ ຊັ້ນ 4 ຕຶກ C ຕັ້ງແຕ່ວັນທີ 30/11/2020 - 04/12/2020 ໃນເວລາລັດຖະການ.

1. **ເງື່ອນໄຂຂອງບໍລິສັດ ,ຫ້າງຮ້ານຜູ້ສະໜອງທີ່ຈະຍືນຊອງປະມູນຕ້ອງປະກອບມີລາຍການດັ່ງນີ້:**

- **<u>ບັນຈຸໃສ່ຊອງທີ່1(ບໍ່ປິດຊອງ):</u>** ໃບທະບຽນວິສາຫະກິດ, ໃບຢັ້ງຢືນການມອບພັນທະອາກອນປີ2019, ໃບຢັ້ງຢືນເປັນຕົວແທນຈຳໜ່າຍ (ຖ້າມີ) ແລະ **ຄັດຕິດແພຕົວຢ່າງຕາມສະເປັກຂັ້ນເທິງມາພ້ອມ.**
- **<u>ບັນບັນຈຸໃສ່ຊອງທີ່2 (ປິດຊອງ):</u>** ໃບສະເໜີລາຄາ (ຕ້ອງກຳນົດເປັນເງິນກີບລວມອາກອນ).
  - ສະເໜີລາຄາເປັນສະກຸນເງິນກີບ ແລະ ລວມອາກອນມູນຄ່າເພີ່ມ (10%) .
  - ກຳນົດການຍື່ນຊອງກ່ອນ **15:30 ໂມງຂອງ ວັນທີ 07/12/2020** ໃນໂມງລັດຖະການ ທີ່ ພະແນກຫ້ອງການບໍລິຫານ-ການເງິນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສຳນັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.
  - ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 07/01/2021)**

ຫຼື ແຊັກທີ່ວີຊ່າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄໍ້າປະກັນດັ່ງກ່າວຄືນ.

2. **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ, ການຊໍາລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

- **ງວດທີ 1:** ຊໍາລະ 20% ຂອງມູນຄ່າພາຍຫລັງເຊັນສັນຍາທັງສອງຝ່າຍ ແລະ ສໍາເລັດການຈົດທະບຽນສັນຍາຈາກພາກສ່ວນທີ່ກ່ຽວຂ້ອງ, ຄ່າຈົດທະບຽນສັນຍາແມ່ນເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- **ງວດທີ 2:** ຊໍາລະ 80% ຂອງມູນຄ່າສັນຍາທັງໝົດພາຍຫຼັງມອບຮັບເຄື່ອງເຂົ້າສາງຄົບຖ້ວນແລ້ວ, ພາຍໃນ 20 ວັນ ລັດຖະການ.

❖ **<u>ໝາຍເຫດ:</u>** ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄໍ້າປະກັນການປະຕິບັດສັນຍາ ຜູ້ຊະນະການປະ ມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທໍານຽມໃນການຈົດທະບຽນສັນຍາ, ຄ່າສິ້ນເປືອງອື່ນໆ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ບໍ່ປະກອບເອກະສານຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກໍານົດຂ້າງເທິງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ປະທານຄະນະກໍາມະການປະມູນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ຫລວງ

**ບັນທະລາດ ແກ້ວປະເສີດ**

**ສອບຖາມລາຍລະອຽດເພີ່ມເຕີ່ມ:** bidcommittee@bcel.com.la
ທ່ານ ນ. ຈັນມາລີ ພິມວົງສາ 020 55888876